ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------

ລັດຖະບານ                                                  ເລກທີ 470 /ລບ

ນະຄອນຫຼວງວຽງຈັນ, ວັນທີ 17/10/2012

# ດຳລັດ

## ວ່າດ້ວຍກອງທຶນປະກັນສຸຂະພາບແຫ່ງຊາດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍການປິ່ນປົວ ສະບັບເລກທີ 09/ສພຊ, ລົງວັນທີ 09 ພະຈິກ 2005;
- ອີງຕາມ ກົດໝາຍວ່າດ້ວຍແຮງງານ ສະບັບເລກທີ 06/ສພຊ, ລົງວັນທີ 27 ທັນວາ 2006;
- ອີງຕາມ ໜັງສືສະເໜີຂອງ ກະຊວງສາທາລະນະສຸກ ສະບັບເລກທີ 1301/ສທ, ລົງວັນທີ 09 ສິງຫາ 2012.

## ລັດຖະບານ ອອກດຳລັດ:

### ໝວດທີ 1
### ບົດບັນຍັດທົ່ວໄປ

ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ກອງທຶນປະກັນສຸຂະພາບແຫ່ງຊາດໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມລະບຽບກົດໝາຍ ເພື່ອເຮັດໃຫ້ພົນລະເມືອງທຸກຖ້ວນໜ້າໄດ້ຮັບການບໍລິການກວດພະຍາດ ແລະ ປິ່ນປົວຢ່າງທົ່ວເຖິງ ແລະ ເປັນທຳ, ແນໃສ່ເຮັດໃຫ້ມີສຸຂະພາບແຂງແຮງດີ, ມີກຳລັງແຮງງານເຂັ້ມແຂງ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ມາດຕາ 2. ກອງທຶນປະກັນສຸຂະພາບແຫ່ງຊາດ

ກອງທຶນປະກັນສຸຂະພາບແຫ່ງຊາດ ຊຶ່ງເອີ້ນຊື່ຫຍໍ້ວ່າ : " **ກປຊ** " ແມ່ນການຈັດຕັ້ງທີ່ມີລັກສະນະສັງຄົມອັນກ້ວາງຂວາງ ຊຶ່ງລວມເອົາກອງທຶນປະກັນສຸຂະພາບຊຸມຊົນ, ລັດຖະກອນ, ວິສາຫະກິດ, ກອງທຶນສຸຂະພາບສຳລັບຜູ້ທຸກຍາກ ແລະ ກອງທຶນປະກັນສຸຂະພາບອື່ນໆ ເພື່ອໃຊ້ຈ່າຍຄ່າບໍລິການກ່ຽວກັບການກວດພະຍາດ ແລະ ປິ່ນປົວໃຫ້ແກ່ສະມາຊິກຂອງຕົນ. ໂດຍຢູ່ພາຍໃຕ້ການຊີ້ນຳຂອງຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ.

ມາດຕາ 3. ການອະທິບາຍຄຳສັບ

ຄຳສັບທີ່ໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການປະກັນສຸຂະພາບ ໝາຍເຖິງ** ນະໂຍບາຍອັນໜຶ່ງໃນນະໂຍບາຍປະກັນສັງຄົມ ທີ່ລັດຖະບານວາງອອກ ເພື່ອຮັບປະກັນໃຫ້ສະມາຊິກກອງທຶນ ສາມາດໄດ້ຮັບການບໍລິການສຸຂະພາບ ໂດຍຜ່ານລະບົບການຈ່າຍເງິນລ່ວງໜ້າຢ່າງເປັນປົກກະຕິ ເຂົ້າໃນການປິ່ນປົວສຸຂະພາບ;
2. **ປະຊາຊົນທີ່ມີອາຊີບອິດສະລະ ໝາຍເຖິງ** ຜູ້ປະກອບອາຊີບດ້ວຍຕົນເອງທີ່ບໍ່ມີເງິນເດືອນປະຈຳ ເຊັ່ນ: ຊາວກະສິກອນ, ຊາວຄ້າຂາຍ, ຜູ້ປະກອບທຸລະກິດຂະໜາດນ້ອຍ, ກຳມະກອນລາຍວັນ, ທີ່ປຶກສາບັນຊີ, ນັກກົດໝາຍ, ນັກຊ່ຽວຊານບັນຊີ ແລະ ອື່ນໆ;
3. **ການສະເລ່ຍຄວາມສ່ຽງຄ່າໃຊ້ຈ່າຍໃນການປິ່ນປົວ ໝາຍເຖິງ** ການສ້າງຄັງສາມັກຄີ ໂດຍຈ່າຍເງິນປະກອບສ່ວນລ່ວງໜ້າ ເພື່ອຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ແບ່ງເບົາຄ່າໃຊ້ຈ່າຍໃນເວລາເຈັບເປັນຂອງກຸ່ມຄົນເຊັ່ນ : ຜູ້ໜຸ່ມຊ່ວຍຜູ້ແກ່ຊະລາ, ຜູ້ແຂງແຮງຊ່ວຍຜູ້ອ່ອນເພຍເຈັບເປັນ ແລະ ຜູ້ມີລາຍໄດ້ຫຼາຍຊ່ວຍຜູ້ມີລາຍໄດ້ຕໍ່າ ຫຼື ຜູ້ບໍ່ມີລາຍໄດ້;
4. **ກອງທຶນປະກັນສຸຂະພາບສຳລັບຜູ້ທຸກຍາກ ໝາຍເຖິງ** ກອງທຶນສັງຄົມສົງເຄາະ ທີ່ໃຊ້ຈ່າຍໃນການປະກັນສຸຂະພາບສຳລັບຜູ້ທີ່ມີລາຍໄດ້ຕໍ່າ ທີ່ບໍ່ສາມາດເຂົ້າເປັນສະມາຊິກຂອງ ກອງທຶນປະກັນສຸຂະພາບໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 45 ແລະ 50 ຂອງ ກົດໝາຍວ່າດ້ວຍການປິ່ນປົວ ເພື່ອໃຊ້ເຂົ້າໃນການກວດພະຍາດ ແລະ ປິ່ນປົວສຸຂະພາບ;
5. **ເບ້ຍປະກັນ ໝາຍເຖິງ** ເງິນສົມທົບ ທີ່ຜູ້ປະກັນຕົນຈ່າຍລ່ວງໜ້າປົກກະຕິປະຈຳເດືອນໃຫ້ ກອງທຶນປະກັນສຸຂະພາບແຫ່ງຊາດ;
6. **ເງິນສົມທົບ ໝາຍເຖິງ** ເງິນທີ່ສະມາຊິກ, ລວມທັງງົບປະມານຈາກລັດ ແລະ ເອກະຊົນ ໄດ້ຈ່າຍລ່ວງໜ້າເຂົ້າກອງທຶນປະກັນສຸຂະພາບ ຢ່າງເປັນປົກກະຕິ ເພື່ອຮັບປະກັນໄດ້ຮັບຜົນປະໂຫຍດໃນເວລາທີ່ເຈັບເປັນ ອີງຕາມເງິນເດືອນ ຫຼື ເງິນຄ່າຈ້າງແຮງງານ ສຳລັບຜູ້ທີ່ມີເງິນເດືອນປະຈຳ ແລະ ລາຍຮັບສຳລັບປະຊາຊົນທີ່ມີອາຊີບອິດສະຫຼະ;
7. **ສະຖານທີ່ໃຫ້ບໍລິການສຸຂະພາບ ໝາຍເຖິງ** ໂຮງໝໍສູນກາງ, ສູນປິ່ນປົວສະເພາະ, ໂຮງໝໍພາກ, ໂຮງໝໍແຂວງ, ໂຮງໝໍເມືອງ, ສຸກສາລາ, ຖົງຢາປະຈຳບ້ານ ແລະ ສະຖານທີ່ບໍລິການສຸຂະພາບອື່ນໆ ທີ່ກະຊວງສາທາລະນະສຸກໄດ້ກຳນົດໄວ້.

ມາດຕາ 4. ຫຼັກການລວມຂອງກອງທຶນປະກັນສຸຂະພາບແຫ່ງຊາດ

ກອງທຶນປະກັນສຸຂະພາບແຫ່ງຊາດ ປະຕິບັດຕາມຫຼັກການ ດັ່ງນີ້:

1. ເປັນພັນທະຂອງພົນລະເມືອງລາວທົ່ວສັງຄົມ ຕ້ອງໄດ້ປະກອບສ່ວນເຂົ້າໃນການພັດທະນາກອງທຶນປະກັນສຸຂະພາບແຫ່ງຊາດ;
2. ການສະເລ່ຍຄວາມສ່ຽງຄ່າໃຊ້ຈ່າຍ ໃນການບໍລິການກວດພະຍາດ ແລະ ປິ່ນປົວສຸຂະພາບ ຂອງສະມາຊິກ;
3. ຮັບປະກັນຄວາມສາມັກຄີ ແລະ ຄວາມເປັນທຳ ໃນການເຂົ້າເຖິງການບໍລິການດ້ານສຸຂະພາບ;
4. ຮັບປະກັນຄວາມຖືກຕ້ອງ, ໂປ່ງໃສ ແລະ ສາມາດກວດສອບໄດ້ ກ່ຽວກັບການໃຊ້ຈ່າຍເງິນກອງທຶນປະກັນສຸຂະພາບແຫ່ງຊາດ.

ມາດຕາ 5. ນະໂຍບາຍຂອງລັດຕໍ່ ກປຊ

ລັດ ເອົາໃຈໃສ່ປະກອບສ່ວນງົບປະມານຢ່າງເໝາະສົມ ເຂົ້າໃນກອງທຶນ ແລະ ມີນະໂຍບາຍຄໍ້າປະກັນ ແລະ ຍົກເວັ້ນອາກອນ ລາຍໄດ້ຂອງກອງທຶນ;

ລັດ ສະໜອງບຸກຄະລາກອນທີ່ຈຳເປັນ ເພື່ອຄຸ້ມຄອງພັດທະນາ ແລະ ຂະຫຍາຍວຽກງານກອງທຶນປະກັນສຸຂະພາບແຫ່ງຊາດ ໃຫ້ທົ່ວເຖິງ;

ລັດ ຊຸກຍູ້ ແລະ ສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃສ່ການພັດທະນາ ກປຊ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີການຂະຫຍາຍຕົວ.

ມາດຕາ 6. ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ ແລະ ນິຕິບຸກຄົນ ທີ່ເປັນສະມາຊິກກອງທຶນປະກັນສຸຂະພາບຂອງພາກລັດຖະກອນ, ພາກວິສາຫະກິດ, ຊຸມຊົນ ແລະ ກອງທຶນສຸຂະພາບສຳລັບຜູ້ທຸກຍາກ.

## ໝວດທີ 2
## ແຫຼ່ງລາຍຮັບຂອງກອງທຶນປະກັນສຸຂະພາບແຫ່ງຊາດ

ມາດຕາ 7. ແຫຼ່ງລາຍຮັບຂອງກອງທຶນປະກັນສຸຂະພາບແຫ່ງຊາດ

ແຫຼ່ງລາຍຮັບຂອງກອງທຶນປະກັນສຸຂະພາບແຫ່ງຊາດ ໄດ້ມາຈາກ:

1. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ;
2. ງົບປະມານຂອງລັດ;
3. ກອງທຶນປະກັນສຸຂະພາບພາກລັດຖະກອນ;
4. ກອງທຶນປະກັນສຸຂະພາບພາກວິສາຫະກິດ;

5. ກອງທຶນປະກັນສຸຂະພາບຊຸມຊົນ;
6. ກອງທຶນສຸຂະພາບສຳລັບຜູ້ທຸກຍາກ;
7. ກອງທຶນອື່ນໆ ທີ່ກ່ຽວຂ້ອງ;
8. ດອກເບ້ຍເງິນຝາກ ຂອງກອງທຶນປະກັນສຸຂະພາບແຫ່ງຊາດ.

**ມາດຕາ 8 . ການຈັດຕັ້ງ ແລະ ການຄຸ້ມຄອງແຫຼ່ງລາຍຮັບຂອງກອງທຶນປະກັນສຸຂະພາບແຫ່ງຊາດ**

ແຫຼ່ງລາຍຮັບຂອງກອງທຶນປະກັນສຸຂະພາບແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງດຳລັດສະບັບນີ້ ຕ້ອງມີການຈັດຕັ້ງ, ຄຸ້ມຄອງ, ບໍລິຫານການເງິນຂອງຕົນເອງ, ມີການຂຶ້ນບັນຊີ ພ້ອມເກັບເງິນ ແລະ ຕ້ອງໂອນເງິນເຂົ້າບັນຊີ ຂອງກອງທຶນປະກັນສຸຂະພາບແຫ່ງຊາດ ເປັນລາຍເດືອນ ຕາມລະບຽບການ.

**ມາດຕາ 9. ກອງທຶນປະກັນສຸຂະພາບລັດຖະກອນ**

ກອງທຶນປະກັນສຸຂະພາບລັດຖະກອນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 48 ຂອງກົດໝາຍວ່າດ້ວຍການປິ່ນປົວ ແມ່ນກອງທຶນຍ່ອຍໜຶ່ງຂອງລະບອບປະກັນສັງຄົມແຫ່ງລັດ ທີ່ມີແຫຼ່ງລາຍຮັບມາຈາກເປີເຊັນເງິນເບ້ຍປະກັນທີ່ມາຈາກເງິນເດືອນທັງໝົດຂອງພະນັກງານ, ລັດຖະກອນ ລວມທັງພະນັກງານບຳນານ, ນັກຮົບເກົ່າ, ຜູ້ເສຍອົງຄະ ຫຼື ເສຍກຳລັງແຮງງານ ທີ່ສັງກັດຢູ່ໃນການຈັດຕັ້ງຂອງພັກ-ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ເພື່ອນຳໃຊ້ເຂົ້າໃນການຮັບບໍລິການກວດພະຍາດ ແລະ ປິ່ນປົວ ຢູ່ສະຖານບໍລິການປິ່ນປົວຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 10. ກອງທຶນປະກັນສຸຂະພາບວິສາຫະກິດ**

ກອງທຶນປະກັນສຸຂະພາບວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 48 ຂອງກົດໝາຍວ່າດ້ວຍການປິ່ນປົວ ແມ່ນກອງທຶນຍ່ອຍໜຶ່ງຂອງລະບອບປະກັນສັງຄົມພາກວິສາຫະກິດ ທີ່ມີແຫຼ່ງລາຍຮັບມາຈາກເປີເຊັນເງິນເບ້ຍປະກັນທີ່ມາຈາກເງິນເດືອນທັງໝົດຂອງຜູ້ອອກແຮງງານ ແລະ ສະມາຊິກອື່ນໆ ເພື່ອນຳໃຊ້ເຂົ້າໃນການຮັບບໍລິການກວດພະຍາດ ແລະ ປິ່ນປົວ ຢູ່ສະຖານບໍລິການປິ່ນປົວຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 11. ກອງທຶນປະກັນສຸຂະພາບຊຸມຊົນ**

ກອງທຶນປະກັນສຸຂະພາບຊຸມຊົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍວ່າດ້ວຍການປິ່ນປົວ ແມ່ນມີແຫຼ່ງລາຍຮັບມາຈາກເງິນສົມທົບ ຂອງປະຊາຊົນຜູ້ມີອາຊີບອິດສະຫຼະ ລວມທັງພະສົງ, ສຳມະເນນ, ນັກບວດ, ນັກສຶກສາ ໃນອັດຕາ 50% ຂອງເບ້ຍປະກັນ ແລະ ລັດຖະບານ ປະກອບສ່ວນໃຫ້ອີກ 50% ຂອງເບ້ຍປະກັນ ເພື່ອນຳໃຊ້ເຂົ້າໃນການຮັບບໍລິການກວດພະຍາດ ແລະ ປິ່ນປົວ ຢູ່ສະຖານບໍລິການປິ່ນປົວຕ່າງໆ ຕາມອັດຕາເບ້ຍປະກັນ ທີ່ໄດ້ກຳນົດໄວ້ໃນລະບຽບການກ່ຽວຂ້ອງ.

ມາດຕາ 12. ກອງທຶນສຸຂະພາບສຳລັບຜູ້ທຸກຍາກ

. ກອງທຶນສຸຂະພາບສຳລັບຜູ້ທຸກຍາກ ແມ່ນກອງທຶນເພື່ອຊ່ວຍເຫຼືອຜູ້ທຸກຍາກ, ຜູ້ທີ່ມີລາຍໄດ້ຕ່ຳກວ່າມາດຕະຖານການຫຼຸດພົ້ນຄວາມທຸກຍາກ ຂອງ ສປປ ລາວ ທີ່ບໍ່ສາມາດເຂົ້າເປັນສະມາຊິກຂອງກອງທຶນປະກັນສຸຂະພາບໃດໜຶ່ງໄດ້ ນຳໃຊ້ເຂົ້າໃນການຮັບບໍລິການກວດພະຍາດ ແລະ ປິ່ນປົວ ຢູ່ສະຖານບໍລິການປິ່ນປົວຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

ກອງທຶນດັ່ງກ່າວນີ້ ມີແຫຼ່ງລາຍຮັບ 100% ມາຈາກການປະກອບສ່ວນຂອງລັດ, ບຸກຄົນ, ນິຕິບຸກຄົນ, ຊຸມຊົນ, ອົງການຈັດຕັ້ງສັງຄົມ ທັງພາຍໃນ ແລະ ຕ່າງປະເທດ.

ມາດຕາ 13. ກອງທຶນອື່ນໆ ທີ່ກ່ຽວຂ້ອງ

ກອງທຶນອື່ນໆ ທີ່ກ່ຽວຂ້ອງ ແມ່ນບັນດາກອງທຶນທີ່ມີເປົ້າໝາຍສະເພາະໃດໜຶ່ງ ຫຼື ກອງທຶນ ທີ່ໃຫ້ການສະໜັບສະໜູນ ກ່ຽວກັບວຽກງານປະກັນສຸຂະພາບແຫ່ງຊາດ ທີ່ລັດຖະບານອະນຸຍາດ ໃຫ້ສ້າງຕັ້ງ ແລະ ເຄື່ອນໄຫວ ເປັນຕົ້ນ ກອງທຶນຄວບຄຸມຢາສູບ ແລະ ອື່ນໆ.

## ໝວດທີ 3
## ຜົນປະໂຫຍດຂອງສະມາຊິກກອງທຶນປະກັນສຸຂະພາບແຫ່ງຊາດ

ມາດຕາ 14. ຜົນປະໂຫຍດຂອງສະມາຊິກກອງທຶນປະກັນສຸຂະພາບແຫ່ງຊາດ

ສະມາຊິກກອງທຶນປະກັນສຸຂະພາບແຫ່ງຊາດ ຈະໄດ້ຮັບຜົນປະໂຫຍດທາງດ້ານການແພດ ຕາມລະບຽບຄື: ການບໍລິການສົ່ງເສີມສຸຂະພາບ, ກັນພະຍາດ, ປິ່ນປົວ ແລະ ຟື້ນຟູໜ້າທີ່ການ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ ສ່ວນຄ່າໃຊ້ຈ່າຍໃນການໃຊ້ບໍລິການສຸຂະພາບ ແມ່ນເປັນພາລະຂອງກອງທຶນປະກັນສຸຂະພາບແຫ່ງຊາດ.

ມາດຕາ 15. ເງື່ອນໄຂຮັບຜົນປະໂຫຍດດ້ານການແພດ

ຜູ້ທີ່ຈະໄດ້ຮັບຜົນປະໂຫຍດດ້ານການແພດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນສະມາຊິກຂອງ ກອງທຶນປະກັນສຸຂະພາບແຫ່ງຊາດ ຕາມກອງທຶນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປິ່ນປົວ ;
2. ຈ່າຍເງິນສົມທົບເຂົ້າກອງທຶນປະກັນສຸຂະພາບ ທີ່ຕົນຂຶ້ນກັບຢ່າງເປັນປົກກະຕິ ແລະ ຄົບຖ້ວນ;
3. ມີບັດປະກັນສຸຂະພາບ ຫຼື ເອກະສານຢັ້ງຢືນຢ່າງຖືກຕ້ອງ.

**ມາດຕາ 16. ການຂຶ້ນທະບຽນເຂົ້າເປັນສະມາຊິກກອງທຶນປະກັນສຸຂະພາບແຫ່ງຊາດ**

ສະມາຊິກກອງທຶນປະກັນສຸຂະພາບແຫ່ງຊາດ ຕ້ອງຂຶ້ນທະບຽນນຳໜ່ວຍງານຂຶ້ນທະບຽນ ຂອງກອງທຶນປະກັນສຸຂະພາບບ່ອນທີ່ຕົນຂຶ້ນກັບ ກ່ອນທີ່ຈະສົ່ງມາສັງລວມຢູ່ຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ ແລະ ສະມາຊິກກອງທຶນປະກັນສຸຂະພາບແຫ່ງຊາດ ຈະໄດ້ຮັບບັດປະກັນສຸຂະພາບຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 17. ການຈ່າຍເງິນສົມທົບເຂົ້າກອງທຶນປະກັນສຸຂະພາບແຫ່ງຊາດ**

ສະມາຊິກກອງທຶນປະກັນສຸຂະພາບແຫ່ງຊາດ ຕ້ອງຈ່າຍເງິນສົມທົບ ໂດຍຜ່ານກອງທຶນປະກັນສຸຂະພາບທີ່ຕົນຂຶ້ນກັບ.

**ມາດຕາ 18. ບັດປະກັນສຸຂະພາບ**

ບັດປະກັນສຸຂະພາບ ເປັນເອກະສານຢັ້ງຢືນສິດຂອງສະມາຊິກກອງທຶນປະກັນສຸຂະພາບແຫ່ງຊາດ ອອກໃຫ້ໂດຍ ຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ ເພື່ອໄວ້ໃຊ້ເປັນຫຼັກຖານ.

ສະມາຊິກກອງທຶນປະກັນສຸຂະພາບແຫ່ງຊາດ ຕ້ອງໄດ້ແຈ້ງບັດປະກັນສຸຂະພາບ ຫຼື ເອກະສານຢັ້ງຢືນທຸກຄັ້ງທີ່ໄປໃຊ້ບໍລິການຢູ່ໂຮງໝໍ ຫຼື ສະຖານທີ່ໃຫ້ບໍລິການສຸຂະພາບ ໂດຍຜ່ານການກວດກາສິດຈາກໜ່ວຍງານທີ່ຮັບຜິດຊອບ ຂອງສະຖານທີ່ໃຫ້ບໍລິການສຸຂະພາບດັ່ງກ່າວ.

## ໝວດທີ 4
## ການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ

**ມາດຕາ 19. ອົງການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ**

ອົງການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ປະກອບມີ:

1. ຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ຂັ້ນສູນກາງ;
2. ຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ຂັ້ນແຂວງ, ນະຄອນຫຼວງ;
3. ຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ຂັ້ນເມືອງ, ເທດສະບານ.

ຄະນະກຳມະການດັ່ງກ່າວເປັນອົງການບໍ່ປະຈຳການ.

**ມາດຕາ 20. ຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ຂັ້ນສູນກາງ**

ຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ຂັ້ນສູນກາງ ເອີ້ນຊື່ຫຍໍ້ວ່າ "ຄປສ" ຖືກແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງ ລັດຖະມົນຕີວ່າການ ກະຊວງສາທາລະນະສຸກ ຊຶ່ງປະກອບດ້ວຍ:

1. ລັດຖະມົນຕີວ່າການ ກະຊວງສາທາລະນະສຸກ ເປັນປະທານ;
2. ລັດຖະມົນຕີຊ່ວຍວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງປະທານ;
3. ລັດຖະມົນຕີຊ່ວຍວ່າການ ກະຊວງການເງິນ ເປັນຮອງປະທານ;
4. ຄະນະກຳມາທິການວັດທະນະທຳສັງຄົມ, ສະພາແຫ່ງຊາດ ເປັນກຳມະການ;
5. ຫົວໜ້າກົມປິ່ນປົວ, ກະຊວງສາທາລະນະສຸກ ເປັນກຳມະການ;
6. ຫົວໜ້າກົມນະໂຍບາຍ, ກະຊວງການເງິນ ເປັນກຳມະການ;
7. ຫົວໜ້າກົມປະກັນສັງຄົມ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນກຳມະການ;
8. ຫົວໜ້າຫ້ອງການ ສູນກາງສະຫະພັນກຳມະບານລາວ ເປັນກຳມະການ;
9. ຄະນະບໍລິຫານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ເປັນກຳມະການ;
10. ຫົວໜ້າກົມການເງິນ, ກະຊວງສາທາລະນະສຸກ ເປັນກຳມະການ;
11. ຫົວໜ້າຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ ເປັນກຳມະການ;
ທັງເປັນຫົວໜ້າກອງເລຂາ.

ຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ມີອາຍຸການ ຫ້າ ປີ.

ມອບໃຫ້ຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ຂັ້ນສູນກາງ ເປັນຜູ້ສະເໜີຕໍ່ ທ່ານນາຍົກລັດຖະມົນຕີ ເພື່ອແຕ່ງຕັ້ງ ຫົວໜ້າຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ ຂັ້ນສູນກາງ ພ້ອມທັງກຳນົດກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ຂອງຫ້ອງການດັ່ງກ່າວ.

**ມາດຕາ 21. ສິດ ແລະ ໜ້າທີ່ ຂອງຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ**

ຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ພິຈາລະນາ ແລະ ຮັບຮອງແຜນພັດທະນາ, ງົບປະມານ ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຂອງກອງທຶນປະກັນສຸຂະພາບແຫ່ງຊາດ;
2. ພິຈາລະນາ ແລະ ຮັບຮອງເອົາລະບຽບການຕ່າງໆ ຂອງກອງທຶນປະກັນສຸຂະພາບແຫ່ງຊາດ;
3. ພິຈາລະນາ ແລະ ຮັບຮອງການກຳນົດຈຳນວນເງິນປະກອບສ່ວນ, ຈຳນວນເງິນປິ່ນປົວ ແລະ ຈຳນວນເງິນບໍລິຫານຂອງກອງທຶນ ເປັນແຕ່ລະໄລຍະ;
4. ກຳນົດ ແລະ ຮັບຮອງສະຖານທີ່ໃຫ້ບໍລິການສຸຂະພາບ ແລະ ວິທີການຈ່າຍເງິນປິ່ນປົວ ໃຫ້ສະຖານບໍລິການສຸຂະພາບ;
5. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານກອງທຶນປະກັນສຸຂະພາບແຫ່ງຊາດ;
6. ແຕ່ງຕັ້ງຄະນະກວດສອບພາຍໃນ, ສະພາການແພດກອງທຶນປະກັນສຸຂະພາບແຫ່ງຊາດ ແລະ ໜ່ວຍງານອື່ນທີ່ຈຳເປັນ;
7. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານທຶນຮອນ ແລະ ຂໍ້ມູນຂ່າວສານກ່ຽວກັບການປະກັນສຸຂະພາບ ຕາມການມອບໝາຍຂອງລັດຖະບານ;

8. ສະຫຼຸບລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ຂອງກອງທຶນປະກັນສຸຂະພາບແຫ່ງຊາດ ຕໍ່ລັດຖະບານຢ່າງເປັນປົກກະຕິ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 22. ກອງປະຊຸມຂອງຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ**

ກອງປະຊຸມຂອງຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ເປີດຂຶ້ນຢ່າງໜ້ອຍ 4 ຄັ້ງຕໍ່ປີ. ກອງປະຊຸມຈະເປີດຂຶ້ນ ໄດ້ກໍຕໍ່ເມື່ອມີກຳມະການເຂົ້າຮ່ວມຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນກຳມະການທັງໝົດ. ໃນກໍລະນີຈຳເປັນ ແລະ ຮີບດ່ວນ ສາມາດເປີດກອງປະຊຸມສະໄໝວິສາມັນຂຶ້ນກໍໄດ້.

ກອງປະຊຸມຂອງຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ຖືກຮຽກໂຮມໂດຍປະທານ ກປຊ, ໃນກໍລະນີປະທານຕິດຂັດ ຮອງປະທານ ກປຊ ສາມາດຮຽກປະຊຸມໄດ້.

ມະຕິຂອງກອງປະຊຸມຂອງຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ຈະມີຜົນສັກສິດໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງສ່ວນຫຼາຍ, ໃນກໍລະນີທີ່ຄະແນນສຽງເທົ່າກັນ ປະທານກອງປະຊຸມມີສິດອອກສຽງໜຶ່ງ ເປັນສຽງຊີ້ຂາດ.

**ມາດຕາ23. ຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດຂັ້ນແຂວງ/ນະຄອນຫລວງ"ຄປຂ".**

"ຄປຂ" ປະກອບດ້ວຍຕົວແທນ ຈາກພາກສ່ວນ ຕ່າງໆດັ່ງນີ້:

1. ຮອງເຈົ້າແຂວງ/ຮອງເຈົ້າຄອງນະຄອນຫຼວງ ເປັນປະທານ;
2. ຫົວໜ້າພະແນກສາທາລະນະສຸກແຂວງ/ນະຄອນຫຼວງ ເປັນຮອງປະທານ;
3. ຮອງຫົວໜ້າພະແນກການເງິນແຂວງ/ນະຄອນຫຼວງ ເປັນຮອງປະທານ;
4. ຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງປະທານ;
5. ຮອງຫົວໜ້າຫ້ອງການສະພາແຫ່ງຊາດປະຈຳເຂດ ເປັນກຳມະການ;
6. ຫົວໜ້າອຳນວຍການໂຮງໝໍແຂວງ/ນະຄອນຫລວງ ເປັນກຳມະການ;
7. ຮອງຫົວໜ້າສະຫະພັນກຳມະບານແຂວງ/ນະຄອນຫລວງ ເປັນກຳມະການ;
8. ຄະນະບໍລິຫານສະພາການຄ້າ ແລະ ອຸດສາຫະກຳແຂວງ/ນະຄອນຫລວງ ເປັນກຳມະການ;
9. ຫົວໜ້າຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ ປະຈຳແຂວງ/ນະຄອນຫລວງ ເປັນກຳມະການ ທັງເປັນຫົວໜ້າກອງເລຂາ.

"ຄປຂ" ປະກອບດ້ວຍປະທານ 1 ທ່ານ ແລະ ຮອງປະທານ 3 ທ່ານ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍທ່ານເຈົ້າແຂວງ/ນະຄອນຫລວງ ໂດຍການສະເໜີຂອງ "ຄປສ". "ຄປຂ" ຖືກແຕ່ງຕັ້ງໂດຍຕຳແໜ່ງ ດັ່ງທີ່ໄດ້ກຳນົດໃນມາດຕານີ້. ໃນກໍລະນີຜູ້ທີ່ຖືກແຕ່ງຕັ້ງເດີມ ຖືກຍົກຍ້າຍໄປຮັບໜ້າທີ່ອື່ນ, ຜູ້ຖືກແຕ່ງຕັ້ງໃໝ່ແມ່ນຖືກປ່ຽນແທນໂດຍອັດຕະໂນມັດ.

ມອບໃຫ້ຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ຂັ້ນແຂວງ/ນະຄອນຫຼວງ ແຕ່ງຕັ້ງຫົວໜ້າຫ້ອງການບໍລິຫານກອງທຶນຂັ້ນຂອງຕົນ ພ້ອມທັງກຳນົດ ກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງຫ້ອງການດັ່ງກ່າວ.

**ມາດຕາ 24. ສິດ ແລະ ໜ້າທີ່ຂອງ "ຄປຊ".**

- ຄົ້ນຄວ້າແຜນພັດທະນາວຽກງານປະກັນສຸຂະພາບ ໃນເຂດຕົນຮັບຜິດຊອບ ເພື່ອສະເໜີຕໍ່ ຄປສ ຮັບຮອງເອົາ;
- ສະເໜີແຕ່ງຕັ້ງ ແລະ ປົດຕຳແໜ່ງປະທານ, ຮອງປະທານ ແລະ ສະມາຊິກຂອງ "ຄປມ" ຕໍ່ທ່ານເຈົ້າແຂວງ/ນະຄອນຫລວງ;
- ຄົ້ນຄວ້າສະເໜີຂໍອະນຸມັດງົບປະມານຈາກລັດຖະບານປະຈຳປີ ເພື່ອຊ່ວຍເຫຼືອ ຊື້ເບັ້ຍປະກັນສຸຂະພາບໃຫ້ຄອບຄົວ ແລະ ບຸກຄົນຜູ້ປະກັນຕົນທີ່ມີອາຊີບອິດສະຫຼະ, ລວມທັງພະສົງ, ສາມະເນນ, ນັກບວດ, ນັກສຶກສາ ແລະ ບຸກຄົນຜູ້ປະກັນຕົນ ທີ່ທຸກຍາກ ພາຍໃນແຂວງ/ນະຄອນຫລວງ ທີ່ຕົນຮັບຜິດຊອບ;
- ຄຸ້ມຄອງບໍລິຫານລາຍຮັບ-ລາຍຈ່າຍງົບປະມານການເງິນ ຂອງກອງທຶນປະກັນສຸຂະພາບແຫ່ງຊາດຂອງຂັ້ນຕົນ ໃຫ້ຖືກຕ້ອງຕາມລະບຽບຫລັກການ ແລະ ໃຊ້ຈ່າຍຖືກຕ້ອງຕາມເປົ້າໝາຍ.
- ພ້ອມນັ້ນກໍ່ຕ້ອງນຳສົ່ງເງິນໃຫ້ຂັ້ນເທິງ ຕາມສັດສ່ວນທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ເປັນປົກກະຕິ;
- ຄົ້ນຄວ້າພິຈາລະນາການສະເໜີບັນຫາຕ່າງໆຈາກ "ຄປມ" ແລະ ໂຮງໝໍຄູ່ສັນຍາ;
- ຄົ້ນຄ້ວານຳສະເໜີປັບປຸງອັດຕາຈ່າຍເງິນມອບເໝົາ ໃຫ້ໂຮງໝໍຄູ່ສັນຍາ, ລະບຽບການຕ່າງໆ ຕໍ່ "ຄປສ" ພິຈາລະນາຮັບຮອງເອົາ;
- ສົ່ງເສີມ, ຊຸກຍູ້, ຕິດຕາມ, ກວດກາ, ກວດການ ການຈັດຕັ້ງປະຕິບັດ ກອງທຶນປະກັນສຸຂະພາບແຫ່ງຊາດ ຢູ່ບັນດາເມືອງທີ່ຕົນຮັບຜິດຊອບ;
- ເຂົ້າຮ່ວມເປັນພະຍານໃນສັນຍາຮ່ວມໄຕພາຄີ (ກອງທຶນປະກັນສຸຂະພາບແຫ່ງຊາດ-ໂຮງໝໍຄູ່ສັນຍາຜູ້ປະກັນຕົນ);
- ລາຍງານຄວາມຄືບໜ້າຂອງກອງທຶນທີ່ຕົນຮັບຜິດຊອບໃຫ້ ທ່ານເຈົ້າແຂວງ ແລະ " ກປຊ" ຊາບເປັນປົກກະຕິປະຈຳເດືອນ;
- ເປີດກອງປະຊຸມສະໄໝສາມັນ 3 ເດືອນ/ຄັ້ງ, ກໍລະນີຈຳເປັນອາດເປີດກອງປະຊຸມ ວິສາມັນໄດ້;
- ເປີດກອງປະຊຸມໃຫຍ່ 1 ຄັ້ງຕໍ່ປີ ເພື່ອສະຫລຸບຕີລາຄາການຈັດຕັ້ງປະຕິບັດວຽກງານ ກອງທຶນປະກັນສຸຂະພາບແຫ່ງຊາດ ໃນ 1 ປີຜ່ານມາ ແລະ ກຳນົດທິດທາງແຜນການໃນປີຕໍ່ໜ້າ;
- ປະສານສົມທົບກັບທຸກພາກສ່ວນກ່ຽວຂ້ອງເພື່ອປັບປຸງ ແລະ ພັດທະນາກອງທຶນປະກັນສຸຂະພາບແຫ່ງຊາດ ແລະ ຄຸນນະພາບການບໍລິການຢູ່ໂຮງໝໍຄູ່ສັນຍາໃຫ້ດີຂຶ້ນ;
- ເອົາວຽກງານການເຄື່ອນໄຫວກອງທຶນປະກັນສຸຂະພາບແຫ່ງຊາດເຂົ້າຢູ່ໃນວາລະກອງປະຊຸມປະຈຳເດືອນ ຂອງຄະນະພັກ ແລະ ອຳນາດການປົກຄອງ ແຂວງ/ນະຄອນຫລວງ;

- ຍາດແຍ່ງການຊ່ວຍເຫຼືອຈາກອົງການຈັດຕັ້ງ ແລະ ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ຕາມລະບຽບ, ກົດໝາຍບ້ານເມືອງ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງ ທ່ານເຈົ້າແຂວງ/ນະຄອນຫຼວງ.

**ມາດຕາ 25. ຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດຂັ້ນເມືອງ "ຄປມ":**

"ຄປມ" ມີຕົວແທນຈາກພາກສ່ວນຕ່າງໆດັ່ງນີ້:

| | | |
|---|---|---|
| 1. | ທ່ານ ຮອງເຈົ້າເມືອງ | ເປັນປະທານ; |
| 2. | ຫົວໜ້າຫ້ອງການສາທາລະນະສຸກເມືອງ | ເປັນຮອງປະທານ; |
| 3. | ຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ | ເປັນຮອງປະທານ; |
| 4. | ຫົວໜ້າຫ້ອງການເງິນເມືອງ | ເປັນຮອງປະທານ; |
| 5. | ຫົວໜ້າອຳນວຍການໂຮງໝໍເມືອງ | ເປັນກຳມະການ; |
| 6. | ຫົວໜ້າຫ້ອງການແນວລາວສ້າງຊາດເມືອງ | ເປັນກຳມະການ; |
| 7. | ຫົວໜ້າສະຫະພັນກຳມະບານເມືອງ | ເປັນກຳມະການ; |
| 8. | ຫົວໜ້າກຸ່ມບ້ານ | ເປັນກຳມະການ; |

"ຄປມ" ປະກອບດ້ວຍ ປະທານ 1 ທ່ານ ແລະ ຮອງປະທານ 3 ທ່ານ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍທ່ານເຈົ້າເມືອງ ໂດຍການສະເໜີຂອງ "ຄປຂ". "ຄປມ" ຖືກແຕ່ງຕັ້ງໂດຍຕຳແໜ່ງ ດັ່ງທີ່ໄດ້ກຳນົດໃນມາດຕານີ້. ໃນກໍລະນີຜູ້ທີ່ຖືກແຕ່ງຕັ້ງເດີມ ຖືກຍົກຍ້າຍໄປຮັບໜ້າທີ່ອື່ນ, ຜູ້ຖືກແຕ່ງຕັ້ງໃໝ່ແມ່ນຖືກປ່ຽນແທນ ໂດຍອັດຕະໂນມັດ.

ມອບໃຫ້ຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດຂັ້ນເມືອງ ແຕ່ງຕັ້ງຫົວໜ້າຫ້ອງການບໍລິຫານກອງທຶນຂັ້ນຂອງຕົນ ພ້ອມທັງກຳນົດກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງຫ້ອງການດັ່ງກ່າວ.

**ມາດຕາ 26. ສິດ ແລະ ໜ້າທີ່ຂອງ "ຄປມ".**

- ຄົ້ນຄວ້າແຜນພັດທະນາວຽກງານປະກັນສຸຂະພາບ ໃນເຂດເມືອງຕົນຮັບຜິດຊອບ ເພື່ອສະເໜີຕໍ່ "ຄປຂ" ຮັບຮອງເອົາ;
- ສະເໜີແຕ່ງຕັ້ງ ແລະ ປົດຕຳແໜ່ງປະທານ, ຮອງປະທານ ແລະ ຄະນະກຳມະການ "ຄປມ" ຕໍ່ທ່ານເຈົ້າແຂວງ/ນະຄອນຫຼວງ;
- ຄົ້ນຄວ້າສະເໜີຂໍອະນຸມັດງົບປະມານປະຈຳປີສະເໜີຕໍ່ "ຄປຂ" ເພື່ອອຸດໜູນຄອບຄົວ ແລະ ບຸກຄົນຜູ້ປະກັນຕົນທີ່ມີອາຊີບອິດສະຫຼະ, ລວມທັງພະສົງ, ສຳມະເນນ, ນັກບວດ, ນັກສຶກສາ ແລະ ບຸກຄົນຜູ້ປະກັນຕົນທີ່ທຸກຍາກ ພາຍໃນເມືອງ ຕາມກຳນົດໃນດຳລັດສະບັບນີ້;
- ຄົ້ນຄວ້າພິຈາລະນາແກ້ໄຂບັນຫາ ແລະ ຂໍ້ຂັດແຍ່ງຕ່າງໆ ທີ່ເກີດຂຶ້ນກັບວຽກງານປະກັນສຸຂະພາບ ແລະ ນຳສະເໜີບັນຫາຕ່າງໆທີ່ບໍ່ສາມາດແກ້ໄຂໄດ້ຕໍ່ຂັ້ນເທິງ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;

- ຄົ້ນຄວ້ານຳສະເໜີ ການປັບປຸງອັດຕາຈ່າຍເງິນມອບເໝົາໃຫ້ໂຮງໝໍຄູ່ສັນຍາ, ລະບຽບການຕ່າງໆ ຕໍ່ "ຄປຂ" ເພື່ອພິຈາລະນາ;
- ຄຸ້ມຄອງບໍລິຫານລາຍຮັບ-ລາຍຈ່າຍງົບປະມານການເງິນ ຂອງກອງທຶນໃຫ້ຖືກຕ້ອງຕາມຫລັກການ ແລະ ເປົ້າໝາຍການຈ່າຍ; ພ້ອມນັ້ນກໍ່ຕ້ອງນຳສົ່ງເງິນໃຫ້ຂັ້ນເທິງ ຕາມສັດສ່ວນທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະຢ່າງເປັນປົກກະຕິ;
- ຊຸກຍູ້ການຂະຫຍາຍສະມາຊິກປະກັນສຸຂະພາບຊຸມຊົນ ເຂົ້າຢູ່ໃນມາດຕະຖານສ້າງບ້ານ ແລະ ກຸ່ມບ້ານພັດທະນາ;
- ເອົາວຽກງານການເຄື່ອນໄຫວກອງທຶນປະກັນສຸຂະພາບ ເຂົ້າຢູ່ໃນວາລະກອງປະຊຸມປະຈຳເດືອນຂອງຄະນະພັກ ແລະ ອຳນາດການປົກຄອງເມືອງ;
- ເປັນຕົວແທນຂອງກອງທຶນປະກັນສຸຂະພາບແຫ່ງຊາດ ໃນການເຊັນສັນຍາຮ່ວມໄຕພາຄີ;
- ລາຍງານຄວາມຄືບໜ້າຂອງກອງທຶນທີ່ຕົນຮັບຜິດຊອບຕໍ່ ທ່ານເຈົ້າແຂວງ ແລະ ຕໍ່ "ຄປຂ" ຊາບເປັນປົກກະຕິປະຈຳເດືອນ;
- ເປີດກອງປະຊຸມສະໄໝສາມັນທຸກໆ 3 ເດືອນ, ກໍລະນີຈຳເປັນອາດເປີດກອງປະຊຸມວິສາມັນໄດ້;
- ເປີດກອງປະຊຸມໃຫຍ່ 1 ຄັ້ງຕໍ່ປີ ເພື່ອສະຫລຸບ, ຕີລາຄາການຈັດຕັ້ງປະຕິບັດວຽກງານກອງທຶນປະກັນສຸຂະພາບແຫ່ງຊາດ ໃນ 1 ປີຜ່ານມາ ແລະ ກຳນົດທິດທາງແຜນການໃນປີຕໍ່ໜ້າ;
- ຈ່າຍເງິນມອບເໝົາໃຫ້ໂຮງໝໍຄູ່ສັນຍາ ຕາມກຳນົດເວລາ ແລະ ໂຈະການຈ່າຍເງິນມອບເໝົາໃນກໍລະນີທີ່ໂຮງໝໍຄູ່ສັນຍາບໍ່ປະຕິບັດຕາມສັນຍາທີ່ເຊັນກັນໄວ້;
- ໂຄສະນາ, ຂົນຂວາຍ, ຂະຫຍາຍສະມາຊິກກອງທຶນປະກັນສຸຂະພາບແຫ່ງຊາດ ໃຫ້ກວມເອົາປະຊາຊົນທົ່ວເມືອງ;
- ປະສານສົມທົບກັບພາກສ່ວນກ່ຽວຂ້ອງອື່ນໆເພື່ອປັບປຸງ ແລະ ພັດທະນາກອງທຶນປະກັນສຸຂະພາບແຫ່ງຊາດ;
- ຍາດແຍ່ງການຊ່ວຍເຫຼືອຈາກອົງການຈັດຕັ້ງ ແລະ ບຸກຄົນທັງພາຍໃນ ແລະ ຕ່າງປະເທດ ຕາມລະບຽບກົດໝາຍບ້ານເມືອງ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງທ່ານເຈົ້າເມືອງ.

## ໝວດທີ 5
## ອົງການບໍລິຫານກອງທຶນປະກັນສຸຂະພາບແຫ່ງຊາດ

**ມາດຕາ 27. ອົງການບໍລິຫານກອງທຶນປະກັນສຸຂະພາບແຫ່ງຊາດ**

ອົງການບໍລິຫານກອງທຶນປະກັນສຸຂະພາບແຫ່ງຊາດ ປະກອບດ້ວຍ:

1. ຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ ຂັ້ນສູນກາງ;
2. ຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ ຂັ້ນແຂວງ ແລະ ນະຄອນຫຼວງ;
3. ຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ ຂັ້ນເມືອງ ແລະ ເທດສະບານ.

### ມາດຕາ 28. ຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ ຂັ້ນສູນກາງ

ຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ ຂັ້ນສູນກາງ ຂຽນຫຍໍ້ວ່າ "ຫກປຊ" ມີຖານະທຽບເທົ່າກົມ, ສັງກັດຢູ່ກະຊວງສາທາລະນະສຸກ, ມີພາລະບົດບາດເປັນເສນາທິການຊ່ວຍວຽກ ຄະນະກໍາມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ຂັ້ນສູນກາງ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານກອງທຶນປະກັນສຸຂະພາບແຫ່ງຊາດ.

ຄະນະຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ ຂັ້ນສູນກາງ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານຈໍານວນໜຶ່ງ ຕາມຄວາມເໝາະສົມ.

ສໍາລັບຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດຂັ້ນທ້ອງຖິ່ນ ກໍ່ໃຫ້ມີໂຄງສ້າງ ແລະ ໜ້າທີ່ຕາມທີ່ໄດ້ກໍານົດໄວ້ໃນມາດຕານີ້ເຊັ່ນດຽວກັນ.

### ມາດຕາ 29. ສິດ ແລະ ໜ້າທີ່ ຂອງຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດຂັ້ນສູນກາງ

ຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ ຂັ້ນສູນກາງ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ເປັນເສນາທິການ ໃຫ້ແກ່ຄະນະກໍາມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ຂັ້ນສູນກາງ ໃນການວາງແຜນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ;
2. ຄຸ້ມຄອງບໍລິຫານ ດ້ານການເງິນ;
3. ຄົ້ນຄວ້າ ແລະ ສະເໜີ ເພີ່ມຈໍານວນເງິນປະກອບສ່ວນ, ວິທີການຈ່າຍເງິນໃຫ້ ສະຖານທີ່ໃຫ້ບໍລິການສຸຂະພາບ ຕໍ່ຄະນະກໍາມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ພິຈາລະນາ;
4. ຂຶ້ນທະບຽນ, ຮັບເງິນປະກອບສ່ວນ ແລະ ສະຫຼຸບລາຍງານເງິນກອງທຶນດັ່ງກ່າວ ໃນແຕ່ລະເດືອນ, ແຕ່ລະງວດ ແລະ ປີ;
5. ຄົ້ນຄວ້າ, ພິຈາລະນາ, ແກ້ໄຂວຽກງານ ກປຊ;
6. ສະຫຼຸບລາຍງານການເຄື່ອນໄຫວ ຕໍ່ຄະນະກໍາມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ຂັ້ນສູນກາງຊາບ ເປັນປົກກະຕິ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງ ຄປສ.

ສໍາລັບຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດຂັ້ນທ້ອງຖິ່ນ ກໍ່ໃຫ້ປະຕິບັດຕາມສິດ ແລະ ໜ້າທີ່ ທີ່ໄດ້ກໍານົດໄວ້ໃນມາດຕານີ້ເຊັ່ນດຽວກັນ.

## ໝວດທີ 6
## ການຄຸ້ມຄອງການເງິນ ແລະ ການນຳໃຊ້ກອງທຶນປະກັນສຸຂະພາບແຫ່ງຊາດ

**ມາດຕາ 30. ການຄຸ້ມຄອງການເງິນກອງທຶນປະກັນສຸຂະພາບແຫ່ງຊາດ**

ກອງທຶນປະກັນສຸຂະພາບແຫ່ງຊາດ ແມ່ນກອງທຶນ ທີ່ເປັນເອກະລາດທາງດ້ານການເງິນໂດຍມີບັນຊີເງິນຝາກເປັນຂອງຕົນເອງ ຜ່ານລະບົບທະນາຄານ, ລວມສູນ ແລະ ຕິດຕາມຢູ່ຄັງເງິນແຫ່ງຊາດ, ການຄຸ້ມຄອງລະບົບການເງິນ ແລະ ການບັນຊີຂອງກອງທຶນດັ່ງກ່າວ ຕ້ອງປະຕິບັດຕາມລະບຽບການເງິນ, ການບັນຊີແຫ່ງລັດ, ພາຍໃຕ້ການຊີ້ນຳ ຂອງຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ.

**ມາດຕາ 31. ການນຳໃຊ້ກອງທຶນປະກັນສຸຂະພາບແຫ່ງຊາດ**

ເງິນຂອງກອງທຶນປະກັນສຸຂະພາບແຫ່ງຊາດ ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການບໍລິການສົ່ງເສີມສຸຂະພາບ, ກັນພະຍາດ, ປິ່ນປົວ ແລະ ຟື້ນຟູໜ້າທີ່ການ;
2. ການດຳເນີນກິດຈະການຕ່າງໆ ເພື່ອຜົນປະໂຫຍດຂອງກອງທຶນປະກັນສຸຂະພາບແຫ່ງຊາດ;
3. ການບໍລິຫານວຽກງານຂອງກອງທຶນບໍ່ໃຫ້ກາຍ 10% ຂອງເບ້ຍປະກັນສຸຂະພາບ.

**ມາດຕາ 32. ການຈ່າຍເງິນໃຫ້ສະຖານທີ່ໃຫ້ບໍລິການສຸຂະພາບ**

ການຈ່າຍເງິນໃຫ້ສະຖານທີ່ບໍລິການສຸຂະພາບ ຂອງຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ ແຕ່ລະຂັ້ນແມ່ນປະຕິບັດຕາມວິທີການຈ່າຍເງິນ ຕາມທີ່ໄດ້ຕົກລົງກັນໃນສັນຍາລະຫວ່າງ ຫ້ອງການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ແລະ ຜູ້ໃຫ້ບໍລິການ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 33. ຂໍ້ຫ້າມ ສຳລັບພະນັກງານ**

ຫ້າມພະນັກງານຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ ມີພຶດຕິກຳ ດັ່ງນີ້:

1. ໃຊ້ໜ້າທີ່ເພື່ອຫາຜົນປະໂຫຍດແກ່ຕົນເອງ ແລະ ພັກພວກຂອງຕົນ;
2. ປອມແປງເອກະສານ;
3. ປົດບັງ, ເຊື່ອງອຳຂໍ້ມູນ-ຂ່າວສານ;
4. ຮັບສິນບົນ.

**ມາດຕາ 34. ຂໍ້ຫ້າມ ສຳລັບອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ**

ຫ້າມອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ແຊກແຊງ ຫຼື ຂັດຂວາງການປະຕິບັດໜ້າທີ່ວຽກງານ ຂອງພະນັກງານຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ;
2. ປອມແປງເອກະສານ;
3. ປົດບັງ, ເຊື່ອງອຳຂໍ້ມູນ-ຂ່າວສານ.

**ມາດຕາ 35. ຂໍ້ຫ້າມ ສຳລັບສະຖານທີ່ໃຫ້ບໍລິການສຸຂະພາບ**

ຫ້າມສະຖານທີ່ໃຫ້ບໍລິການສຸຂະພາບ ມີພຶດຕິກຳ ດັ່ງນີ້:

1. ໃຊ້ໜ້າທີ່ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ພັກພວກຂອງຕົນ;
2. ປອມແປງເອກະສານ;
3. ຈຳແນກຄົນເຈັບ;
4. ປົດບັງ, ເຊື່ອງອຳຂໍ້ມູນ-ຂ່າວສານ.

**ມາດຕາ 36. ຂໍ້ຫ້າມສຳລັບສະມາຊິກກອງທຶນປະກັນສຸຂະພາບແຫ່ງຊາດ**

ຫ້າມສະມາຊິກກອງທຶນປະກັນສຸຂະພາບແຫ່ງຊາດ ມີພຶດຕິກຳ ດັ່ງນີ້:

1. ໃຫ້ຜູ້ອື່ນນຳໃຊ້ບັດປະກັນສຸຂະພາບ;
2. ປອມແປງເອກະສານ ກ່ຽວກັບການບໍລິການສຸຂະພາບ;
3. ໃຫ້ສິນບົນແກ່ພະນັກງານ ແລະ ເຈົ້າໜ້າທີ່.

## ໝວດທີ 8
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 37. ອົງການແກ້ໄຂຂໍ້ຂັດແຍ່ງ**

ອົງການແກ້ໄຂຂໍ້ຂັດແຍ່ງ ປະກອບດ້ວຍ:

1. ຜູ້ໃຫ້ບໍລິການສາທາລະນະສຸກ;
2. ສະພາການແພດ;
3. ຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ ແຕ່ລະຂັ້ນ;
4. ຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ແຕ່ລະຂັ້ນ.

**ມາດຕາ 38. ຂໍ້ຂັດແຍ່ງໃນການປະກັນສຸຂະພາບ**

ຂໍ້ຂັດແຍ່ງໃນການປະກັນສຸຂະພາບ ມີດັ່ງນີ້:

1. ຂໍ້ຂັດແຍ່ງທີ່ກ່ຽວພັນເຖິງສິດ ແລະ ໜ້າທີ່ຮັບຜິດຊອບຂອງການປະກັນສຸຂະພາບ ຂອງແຕ່ລະເປົ້າໝາຍ;
2. ຂໍ້ຂັດແຍ່ງກ່ຽວກັບການບໍລິການກວດພະຍາດ ແລະ ປິ່ນປົວສຸຂະພາບ;
3. ຂໍ້ຂັດແຍ່ງທີ່ເກີດຂຶ້ນຈາກການບໍລິການດ້ານການເງິນ ແລະ ການບໍລິການດ້ານສຸຂະພາບ.

**ມາດຕາ 39. ວິທີການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງ ໃຫ້ປະຕິບັດຕາມວິທີການ ດັ່ງນີ້:

1. ປຶກສາຫາລື, ປະນີປະນອມກັນ ລະຫວ່າງຄູ່ກໍລະນີ;
2. ການໄກ່ເກ່ຍໂດຍສະຖານບໍລິການ, ສະພາການແພດ, ຫ້ອງການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ, ຄະນະກຳມະການບໍລິຫານກອງທຶນປະກັນສຸຂະພາບແຫ່ງຊາດ;
3. ຕາມຂະບວນການຍຸຕິທຳ.

**ມາດຕາ 40. ຂັ້ນຕອນການຍື່ນຄຳຮ້ອງ**

ສະມາຊິກກອງທຶນປະກັນສຸຂະພາບແຫ່ງຊາດ ບຸກຄົນໃດທີ່ເຫັນວ່າຕົນເອງບໍ່ໄດ້ຮັບການບໍລິການກວດພະຍາດ ແລະ ປິ່ນປົວສຸຂະພາບ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ມີສິດຍື່ນຄຳຮ້ອງສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງຕາມແຕ່ລະຂັ້ນ ຫຼື ຕາມຂັ້ນທີ່ເກີດມີຂໍ້ຂັດແຍ່ງນັ້ນ ພາຍໃນເວລາ 10 ວັນ ທີ່ເກີດຂໍ້ຂັດແຍ່ງດັ່ງກ່າວ.

## ໝວດທີ 9
## ການຕິດຕາມກວດກາ

**ມາດຕາ 41. ອົງການກວດກາ**

ອົງການກວດກາປະກອບດ້ວຍ:

1. ອົງການການກວດກາພາຍໃນ ແມ່ນກົມກວດກາຂອງກະຊວງສາທາລະນະສຸກ, ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ, ຫ້ອງການສາທາລະນະສຸກເມືອງ ແລະ ເທດສະບານ;
2. ອົງການກວດກາພາຍນອກ ແມ່ນອົງການກວດສອບແຫ່ງລັດ, ກະຊວງແຮງງານ ແລະສະຫວັດດີການສັງຄົມ, ກະຊວງການເງິນ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 42. ເນື້ອໃນ ແລະ ຮູບການກວດກາ**

ເນື້ອໃນການກວດກາ ມີດັ່ງນີ້:

1. ການຄຸ້ມຄອງ, ການນຳໃຊ້ ກອງທຶນປະກັນສຸຂະພາບແຫ່ງຊາດ ຕາມເປົ້າໝາຍທີ່ໄດ້ກຳນົດໄວ້;

2. ຄວາມໂປ່ງໃສໃນການນຳໃຊ້ເງິນກອງທຶນປະກັນສຸຂະພາບແຫ່ງຊາດ;
3. ປະສິດທິຜົນຂອງການນຳໃຊ້ແຫຼ່ງທຶນ;
4. ການແກ້ໄຂຂໍ້ຂັດແຍ່ງ ລະຫວ່າງຜູ້ໃຫ້ບໍລິການ ແລະ ຜູ້ຮັບບໍລິການ, ຄຳສະເໜີ ຂອງສະມາຊິກກອງທຶນປະກັນສຸຂະພາບ, ການຈັດຕັ້ງກ່ຽວກັບການປິ່ນປົວ, ບຸກຄົນທົ່ວໄປ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ.

ຮູບການກວດກາ ມີດັ່ງນີ້:

1. ກວດກາຕາມແຜນການປົກກະຕິ;
2. ກວດກາບອກແຜນການ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ກວດກາແບບກະທັນຫັນ.

ໃນການກວດການັ້ນ ໃຫ້ດຳເນີນການກວດເອກະສານ ແລະ ສະຖານທີ່ປະຕິບັດການຕົວຈິງໃຫ້ລະອຽດ, ຄົບຖ້ວນ ແລະ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

### ມາດຕາ 43. ການລາຍງານ

ຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ ແຕ່ລະຂັ້ນຕ້ອງໄດ້ສັງລວມສະຫຼຸບ, ລາຍງານການຈັດຕັ້ງປະຕິບັດກອງທຶນປະກັນສຸຂະພາບແຫ່ງຊາດ ໃຫ້ຄະນະກຳມະການຄຸ້ມຄອງກອງທຶນແຫ່ງຊາດ, ຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເປັນເດືອນ, ງວດ, ຫົກເດືອນ ແລະ ປະຈຳປີ.

## ໝວດທີ 10
## ຕາປະທັບ

### ມາດຕາ 44. ຕາປະທັບ

ຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ແລະ ຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ ແຕ່ລະຂັ້ນມີຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ.

### ມາດຕາ 45. ເຄື່ອງໝາຍ

ກອງທຶນປະກັນສຸຂະພາບແຫ່ງຊາດ ມີເຄື່ອງໝາຍເປັນຂອງຕົນເອງ ຊຶ່ງຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ ຂັ້ນສູນກາງ ເປັນຜູ້ກຳນົດ ແລະ ອອກແບບ.

# ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 46. ການຈັດຕັ້ງປະຕິບັດ**

ຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ, ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງການເງິນ, ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີໜ້າທີ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ປາກົດຜົນເປັນຈິງ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນຈົ່ງຮັບຮູ້ ໃຫ້ຄວາມຮ່ວມມື ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 47. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບ ດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ